**DAK LAK RUBBER COMPANY.,LTD (DAKLAORUCO)**
**Address: Thaluong Village - Pakse District - Champasak Province - Lao PDR**
**Tel: 00856 31 21 25 70; Fax: 00856 31 25 29 82**
**Email: daklaoruco.lao@gmail.com Website: http://www.daklaoruco.com**

ເລກທີ: 05/ລງ- FSC *ປາກເຊ, ວັນທີ 20 ເດືອນ 01 ປີ 2025*

**ບົດລາຍງານ**

**ວ່າດ້ວຍການຈັດຕັ້ງປະຕິບັດກົດລະບຽບຂັ້ນຕອນການແກ້ໄຂ**

**ຂໍ້ຂັດແຍ່ງລະຫວ່າງບໍລິສັດກັບຜູ້ອອກແຮງງານປີ 2024**

- ອີງຕາມກົດຫມາຍວ່າດ້ວຍ ແຮງງານ ສະບັບເລກທີ 43/ສພຊ (ສະບັບປັບປຸງ) ລົງວັນທີ 24/12/2013 ອອກໂດຍສະພາແຫ່ງຊາດ ຂອງ ສປປ ລາວ;

- ອີງຕາມມາດຕະຖານແຫ່ງຊາດສະບັບ ຊົ່ວຄາວສໍາລັບການປະເມີນປ່າໄມ້ ຂອງ ສປປ ລາວ (FSC-STD-LAO-01-2020);

- ອີງຕາມກົດລະບຽບສະບັບເລກທີ 13/ລບ- ບສ ລົງວັນທີ 27/06/2023 ຂອງຜູ້ອໍານວຍການບໍລິສັດ ວ່າດ້ວຍ ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດກັບຜູ້ອອກແຮງງານ;

- ອີງຕາມກົດລະບຽບເລກທີ 06/ລບ- ບສ ລົງວັນທີ 27/06/2023 ຂອງຜູ້ອໍານວຍການບໍລິສັດ ວ່າດ້ວຍ ກົນໄກຮັບແລະແກ້ໄຂໜັງສືຮ້ອງຮຽນ, ປະກອບຄໍາເຫັນຂອງພາກສ່ວນທີ່ກ່ຽວຂ້ອງ;

- ອີງຕາມບົດບາດແລະໜ້າທີ່ ຂອງຄະນະ FSC ຂອງບໍລິສັດ;

ຄະນະ FSC ຂອງບໍລິສັດລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍ ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງລະຫວ່າງ ບໍລິສັດກັບຜູ້ອອກແຮງງານ ປີ 2024 ດັ່ງຕໍ່ໄປນີ້:

ເພື່ອຮັບປະກັນສິດ, ພັນທະ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ອອກແຮງງານ, ຮັບປະກັນການເຄື່ອນໄຫວຂອງບໍລິສັດປະຕິບັດຕາມກົດໝາຍ ແລະ ສົນທິສັນຍາສາກົນ, ກໍຄືປະຕິບັດຕາມມາດຕະຖານແຫ່ງຊາດສະບັບຊົ່ວຄາວ ສໍາລັບການປະເມີນປ່າໄມ້ ຂອງ ສປປ ລາວ (FSC-STD-LAO-01-2020). ບໍລິສັດໄດ້ອອກກົດລະບຽບເລກທີ 13/ລບ- ບສ ລົງວັນທີ 27/06/2023 ຂອງຜູ້ອໍານວຍການບໍລິສັດ ວ່າດ້ວຍ ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດກັບຜູ້ອອກແຮງງານ.

**1. ຜົນການຈັດຕັ້ງປະຕິບັດກົດລະບຽບ:**

**1.1 ຈັດຕັ້ງປະຕິບັດການເຜີຍແຜ່, ໂຄສະນາໃຫ້ທັງໝົດພະນັກງານກໍາມະກອນ, ຜູ້ອອກແຮງງານ ແລະຊຸມຊົນທ້ອງຖິ່ນ ຮັບຮູ້ກ່ຽວກັບ:**

***1.1.1. ເນື້ອໃນການແກ້ໄຂຂໍ້ຂັດແຍ່ງດ້ານແຮງງານ***

- ການແກ້ໄຂຂໍ້ຂັດແຍ່ງດ້ານແຮງງານ ແມ່ນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດ, ພັນທະ ແລະ ຜົນປະໂຫຍດທີ່ເກີດຂຶ້ນລະຫວ່າງບໍລິສັດກັບຜູ້ອອກແຮງງານເຊັ່ນ: ວຽກເຮັດງານທໍາ, ຊົ່ວໂມງເຮັດວຽກ ແລະ ການພັກຜ່ອນ, ການຝຶກອົບຮົມ, ເງິນເດືອນ, ໂບນັດ, ປະເພດປະກັນຕ່າງໆ….

- ຫຼັກການແກ້ໄຂຂໍ້ຂັດແຍ່ງ:

+ ເຄົາລົບການແກ້ໄຂໂດຍການໄກ່ເກ່ຍ ບົນພື້ນຖານເຄົາລົບສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ບໍລິສັດ ແລະ ຜູ້ອອກແຮງງານ, ຮັບປະກັນການເປີດເຜີຍ, ກົງໄປກົງມາແລະທັນເວລາ...

+ ໃນກໍລະນີບໍ່ສາມາດຕົກລົງກັນໄດ້, ບໍລິສັດ ຫຼື ຜູ້ອອກແຮງງານມີສິດຮ້ອງຂໍອຳນາດການປົກຄອງ ຫຼື ບຸກຄົນທີ່ມີສິດອຳນາດເພື່ອແກ້ໄຂ.

- ສິດ ແລະ ພັນທະຂອງບໍລິສັດ ແລະ ຜູ້ອອກແຮງງານໃນການແກ້ໄຂຂໍ້ຂັດແຍ່ງ:

+ ທັງສອງຝ່າຍມີສິດເຂົ້າຮ່ວມໂດຍກົງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມ, ຖອນ ຫຼື ປ່ຽນແປງເນື້ອໃນຄຳຮ້ອງຂໍ ແລະ ມີສິດຮ້ອງຂໍໃຫ້ປ່ຽນຜູ້ດຳເນີນການແກ້ໄຂຂໍ້ຂັດແຍ່ງ ຖ້າມີເຫດຜົນທີ່ເຊື່ອວ່າບຸກຄົນດັ່ງກ່າວແກ້ໄຂແບບບໍ່ກົງໄປກົງມາ .

+ ມີພັນທະຕ້ອງສະໜອງເອກະສານ ແລະ ຫຼັກຖານໃຫ້ຄົບຖ້ວນ ແລະ ທັນເວລາ, ຫ້າມບໍ່ໃຫ້ມີການກະທຳແບບຄັດຄ້ານຕໍ່ອີກຝ່າຍ. ຍອມຮັບຜົນການຕົກລົງຫຼືການຕັດສິນໃນການແກ້ໄຂຂອງອົງການທີ່ມີສິດອຳນາດ.

### *1.1.2 ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ*

- ຜູ້ອອກແຮງງານສົ່ງໜັງສືຮ້ອງຮຽນແກ້ໄຂຂໍ້ຂັດແຍ່ງດ້ານແຮງງານຕໍ່ຄະນະນຳຂອງບໍລິສັດຫຼືຫົວໜ້າຫ້ອງການຂອງບໍລິສັດໂດຍກົງ.

- ພາຍໃນບໍ່ເກີນ 05 ວັນ, ລະຫວ່າງບໍລິສັດ ແລະ ຜູ້ອອກແຮງງານຕ້ອງພົບກັນເພື່ອເຈລະຈາ ແລະ ແກ້ໄຂຂໍ້ຂັດແຍ່ງດ້ານແຮງງານ.

- ໃນກໍລະນີໄກ່ເກ່ຍກັນພາຍໃນສຳເລັດ, ທັງສອງຝ່າຍສ້າງບົດບັນທຶກແລະລົງລາຍເຊັນໃຫ້ຄຳໝັ້ນສັນຍາຈະປະຕິບັດຕາມເນື້ອໃນທີ່ໄດ້ໄກ່ເກ່ຍ. ບໍລິສັດປະກາດຜົນຂອງການແກ້ໄຂເຖິງພະນັກງານກຳມະກອນທັງໝົດໃນບໍລິສັດຢ່າງເປີດເຜີຍ.

- ກໍລະນີໄກ່ເກ່ຍກັນພາຍໃນບໍ່ສຳເລັດ ຫຼື ໜຶ່ງໃນສອງຝ່າຍບໍ່ປະຕິບັດຕາມຄຳໝັ້ນສັນຍາທີ່ລົງລາຍເຊັນ, ແມ່ນອີກຝ່າຍມີສິດຍື່ນຄຳຮ້ອງຕໍ່ອົງການທີ່ມີສິດອຳນາດຂອງລັດເພື່ອແກ້ໄຂຕາມລະບຽບກົດໝາຍ.

- ຂໍ້ຂັດແຍ່ງບໍ່ຈຳເປັນຕ້ອງຜ່ານຂັ້ນຕອນການໄກ່ເກ່ຍ:

+ ກ່ຽວກັບການໃສ່ວິໄນແຮງງານໃນຮູບແບບຖືກໄລ່ອອກຫຼືກໍລະນີຍົກເລີກສັນຍາແຮງງານຝ່າຍດຽວ;

+ ກ່ຽວກັບການຊົດເຊີຍຄ່າເສຍຫາຍແລະອຸດໜູນໃນເມື່ອຍົກເລີກສັນຍາແຮງງານ;

+ ກ່ຽວກັບປະກັນສັງຄົມຕາມລະບຽບກົດໝາຍເຊັ່ນ: ປະກັນສັງຄົມ, ປະກັນສຸຂະພາບ, ປະກັນໄພຫວ່າງງານ, ປະກັນອຸບັດເຫດແຮງງານແລະພະຍາດອາຊີບ.

**1.2. ຜົນໄດ້ຮັບ:** ແຕ່ເດືອນ 01/2024 ຫາວັນທີ 31/12/2024, ບໍລິສັດຍັງບໍ່ທັນໄດ້ຮັບໜັງສືຮ້ອງຮຽນວ່າດ້ວຍແກ້ໄຂຂໍ້ຂັດແຍ່ງດ້ານແຮງງານເທື່ອ.

## 2. ແຜນການ 6 ເດືອນຕົ້ນປີ 2025.

- ສືບຕໍ່ຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດກັບຜູ້ອອກແຮງງານໃນແຕ່ລະປີ.

- ບໍລິສັດ ໃຫ້ຄວາມສຳຄັນກັບການຕິດຕາມກວດກາ ແລະກວດພົບການລະເມີດພາຍໃນດ້ວຍຕົນເອງ. ມີການລົງໂທດສຳລັບກໍລະນີທີ່ລະເມີດ.

ຂ້າງເທິງແມ່ນເນື້ອໃນຂອງບົດລາຍງານການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດກັບຜູ້ອອກແຮງງານໃນປີ 2024.

**ຄະນະ FSC ບໍລິສັດ**

**ດັ້ງ ດິ່ງ ຟຸ່ງ**

**Dang Dinh Phung**

***ບ່ອນນຳສົ່ງ:***

- ຄະນະ ອນກ ບສ;
- ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ຄະນະ **FSC** ບສ;
- Website ບສ;
- ສຳເນົາຂາອອກ-ຂາເຂົ້າ.